ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2822 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 11 ພະຈິກ 2025

# ແຈ້ງການ

**ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;**
**- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ, ເຂດເສດຖະກິດພິເສດ;**
**- ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.**

**ເລື່ອງ: ບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ.**

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 0111/ກຄວ, ລົງວັນທີ 28 ກໍລະກົດ 2025.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ກ່ຽວກັບບັນຊີປະເພດກິດຈະການສະຫງວນໄວ້ ສຳລັບພົນລະເມືອງລາວ ດັ່ງນີ້:

1. ປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ແມ່ນປະເພດທຸລະກິດ ທີ່ເປັນມູນເຊື້ອອັນຍາວນານຂອງປະຊາຊົນບັນດາເຜົ່າ, ປະເພດທຸລະກິດ ທີ່ບໍ່ຈຳເປັນຕ້ອງໃຊ້ຄວາມຮູ້ສູງ, ເຕັກນິກ ຫຼື ທຶນຮອນໃນການປະກອບທຸລະກິດ ຫຼື ທຸລະກິດບາງປະເພດ ທີ່ລັດຖະບານ ມີຈຸດປະສົງສະຫງວນໄວ້ ສຳລັບພົນລະເມືອງລາວ ເພື່ອຮັກສາໄວ້ ຊຶ່ງທຸລະກິດທີ່ເປັນເອກະລັກຂອງຊາດ ຫຼື ທຸລະກິດທີ່ມີຄວາມສຳຄັນຈຳເປັນ ໃຫ້ຢູ່ຄູ່ຄົນລາວ ໃນການສ້າງວຽກເຮັດງານທຳ, ສ້າງລາຍໄດ້ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ພົນລະເມືອງລາວ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍສັນຊາດລາວ;

2. ການຂຶ້ນທະບຽນວິສາຫະກິດ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ສອດຄ່ອງຕາມແຈ້ງການສະບັບນີ້ ລ້ວນແລ້ວແຕ່ເປັນໂມຄະ, ຜູ້ທີ່ລະເມີດຕ້ອງຮັບຜິດຊອບຕາມກົດໝາຍ;

3. ບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ໄດ້ຄັດຕິດມາພ້ອມນີ້;

4. ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຖ້າຫາກຂະແໜງການກ່ຽວຂ້ອງ ມີຈຸດປະສົງ ເພີ່ມ ຫຼື ຫຼຸດບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ໃຫ້ສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປັບປຸງປ່ຽນແປງ ໃນແຕ່ລະໄລຍະ;

5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1328/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015;

6. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ

# ບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ

ບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ມີດັ່ງນີ້:

| ລຳດັບ | ເລກລະຫັດ LSIC | ປະເພດທຸລະກິດ | ນິຕິກຳທີ່ກ່ຽວຂ້ອງ | ພາກສ່ວນຮັບຜິດຊອບ |
|---|---|---|---|---|
| **ກະສິກຳ ແລະ ປ່າໄມ້** | | | | |
| 1 | 02309 | ການເກັບເຄື່ອງປ່າຂອງດົງ ຫຼື ພຶດຜົນຈາກປ່າໄມ້ ສຳລັບ ISIC ນີ້ແມ່ນສະຫງວນສະເພາະ ທຸລະກິດຂຸດຄົ້ນຊັບພະຍາກອນທຳມະຊາດ ທີ່ເປັນຢາ | – ກົດໝາຍ ວ່າດ້ວຍຊັບພະຍາກອນທີ່ເປັນຢາ ສະບັບເລກທີ 55/ສພຊ, ລົງວັນທີ 28 ມິຖຸນາ 2024 | ກະຊວງສາທາລະນະສຸກ |
| **ອຸດສາຫະກຳປຸງແຕ່ງ** | | | | |
| 2 | 13121 | ການຕໍ່າແຜ່ນແພ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະການຕໍ່າຫູກລວມທັງການອອກແບບ, ການເກັບ, ການຈົກລວດລາຍ ແລະ ການມັດໝີ່ແບບພື້ນເມືອງລາວ) | – ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ຂໍ້ຕົກລົງ ວ່າດ້ວຍໂຮງງານ ສະບັບເລກທີ 0166/ອຄ, ລົງວັນທີ 9 ກຸມພາ 2023. | ກະຊວງອຸດສາຫະກຳ ແລະ ການຄ້າ |
| 3 | 13910 | ການຖັກ ແລະ ແສ່ວຜ້າແພ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະການຖັກແສ່ວຜ້າໄໝລາວ ທີ່ມີລວດລາຍສິນລະປະບູຮານຂອງຊົນເຜົ່າຕ່າງໆທີ່ເປັນເອກະລັກ) | – ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ຂໍ້ຕົກລົງ ວ່າດ້ວຍໂຮງງານ ສະບັບເລກທີ 0166/ອຄ, ລົງວັນທີ 9 ກຸມພາ 2023. | ກະຊວງອຸດສາຫະກຳ ແລະ ການຄ້າ |
| 4 | 16290 | ການຜະລິດ ຜະລິດຕະພັນອື່ນຈາກໄມ້, ການຜະລິດເຄື່ອງໃຊ້ຈາກຫວາຍ ເຟືອງ ແລະ ວັດ ຖຸຈັກສານ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ແລະ ການເຮັດທຸລະກິດສະເພາະກ່ຽວກັບການແກະສະຫຼັກໄມ້ ແລະ ການຈັກ ສານອື່ນໆທີ່ມີລວດລາຍສິນລະປະ ບູຮານຂອງຊົນເຜົ່າຕ່າງໆທີ່ເປັນເອກະລັກ) | – ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>- ຂໍ້ຕົກລົງ ວ່າດ້ວຍໂຮງງານ ສະບັບເລກທີ 0166/ອຄ, ລົງວັນທີ 9 ກຸມພາ 2023. | ກະຊວງອຸດສາຫະກຳ ແລະ ການຄ້າ |

| | | | | |
|---|---|---|---|---|
| 5 | 23912 | ການຜະລິດຕະພັນເຄື່ອງປັ້ນດິນເຜົາ ແລະ ຖ້ວຍຊາມທີ່ເປັນກະເບື້ອງອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະກ່ຽວກັບ ການຜະລິດເຄື່ອງປັ້ນດິນເຜົາແບບຫັດຖະ ກຳພື້ນເມືອງລາວ ແລະ ລວດລາຍສິນລະປະບູຮານຂອງຊົນເຜົ່າຕ່າງໆທີ່ເປັນເອກະລັກ) | – ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>– ກົດໝາຍ ວ່າດວ້ຍວິຈິດສິນ ສະບັບເລກທີ 19/ສພຊ, ລົງວັນທີ 7 ກໍລະກົດ 2022;<br>– ຂໍ້ຕົກລົງ ວ່າດ້ວຍໂຮງງານ ສະບັບເລກທີ 0166/ອຄ, ລົງວັນທີ 9 ກຸມພາ 2023. | ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ |
| 6 | 32120 | ການຜະລິດເຄື່ອງເອ້ທຽມ ແລະ ສິ້ນສ່ວນປະກອບ (ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະ ກ່ຽວກັບການຜະລິດແບບຫັດຖະກຳພື້ນເມືອງລາວ ແລະ ລວດລາຍສິນລະປະບູຮານຂອງຊົນເຜົ່າຕ່າງໆທີ່ເປັນເອກະລັກ) | – ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;<br>– ກົດໝາຍ ວ່າດວ້ຍວິຈິດສິນ ສະບັບເລກທີ 19/ສພຊ, ລົງວັນທີ 7 ກໍລະກົດ 2022;<br>– ຂໍ້ຕົກລົງ ວ່າດ້ວຍໂຮງງານ ສະບັບເລກທີ 0166/ອຄ, ລົງວັນທີ 9 ກຸມພາ 2023. | ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ |
| **ການສະໜອງໄຟຟ້າ, ອາຍແກັດ, ອາຍຮ້ອນ ແລະ ອາກາດປັບແຕ່ງ** | | | | |
| 7 | 35102 | ການຜະລິດ, ຖ່າຍກຳລັງ ແລະ ແຈກຈ່າຍກະແສໄຟຟ້າ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະການດຳເນີນທຸລະກິດໂຄງການໄຟຟ້ານ້ຳຕົກໃນ ສປປ ລາວ ທີ່ມີກຳລັງການຕິດຕັ້ງ 15 ເມກາວັດ ລົງມາໃນຮູບແບບບໍ່ມີການສຳປະທານໂຄງການ ) | – ກົດໝາຍ ວ່າດ້ວຍໄຟຟ້າ ສະບັບເລກທີ 19/ສພຊ, ລົງວັນທີ 9 ພຶດສະພາ 2017. | ກະຊວງອຸດສາຫະກຳ ແລະ ການຄ້າ |
| **ການກໍ່ສ້າງ** | | | | |
| 8 | 43211 | ການຕິດຕັ້ງໄຟຟ້າ ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະການບໍລິການຕິດຕັ້ງລະບົບໄຟຟ້າພາຍໃນອາຄານ) | – ກົດໝາຍ ວ່າດ້ວຍໄຟຟ້າ ສະບັບເລກທີ 19/ສພຊ, ລົງວັນທີ 9 ພຶດສະພາ 2017. | ກະຊວງອຸດສາຫະກຳ ແລະ ການຄ້າ |

| | | | | |
|---|---|---|---|---|
| **ການຄ້າຂາຍຍົກ ແລະ ຍ່ອຍ, ສ້ອມແປງລົດຍົນ ແລະ ລົດຈັກ** | | | | |
| 9 | 45101<br>ຫາ<br>47990 | ການຄ້າຂາຍຍົກ ແລະ ຂາຍຍ່ອຍ, ສ້ອມແປງລົດຍົນ ແລະ ລົດຈັກ ສໍາລັບ ຂະແນງ G ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ( ທີ່ໃຊ້ທຶນຈົດທະບຽນຕໍ່າກວ່າ 4 ຕື້ກີບລົງມາ) ຍົກເວັ້ນ ເລກລະຫັດ 452 ໃຫ້ເບິ່ງລະຫັດ 4520 ໃນບັນຊີ ງ 02-2015 | - ຂໍ້ຕົກລົງ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 | ກະຊວງອຸດສາຫະກໍາ ແລະ ການຄ້າ |
| **ການຂົນສົ່ງ ແລະ ສາງສິນຄ້າ** | | | | |
| 10 | 49223 | ຂົນສົ່ງໂດຍສານທາງບົກພາຍໃນຕົວເມືອງ ຫຼື ແຖບຊານເມືອງ ແລະ ຕ່າງປະເທດ | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025; | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 11 | 49229 | ການຂົນສົ່ງໂດຍສານທາງບົກອື່ນໆ (ຍົກເວັ້ນທຸລະກິດການບໍລິການລົດແທັກຊີມິເຕີ) | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025; | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 12 | 52219 | ການເຄື່ອນໄຫວບໍລິການປະຈໍາວັນໃຫ້ການຂົນສົ່ງທາງບົກ (ສໍາລັບ ISIC ນີ້ແມ່ນສະຫງວນສະເພາະກິດຈະການ ກ່ຽວກັບສະຖານີລົດຂົນສົ່ງໂດຍສານ) | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025; | ກະຊວງໂຍທາທິການ ແລະ ຂົນສົ່ງ |

| | | | | |
|---|---|---|---|---|
| 13 | 85491 | ໂຮງຮຽນສອນຂັບລົດ ພາຫະນະທົ່ວໄປ) | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດຳເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025; | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 14 | 43299 | ຜະລິດ ແລະ ຕິດຕັ້ງປ້າຍຈາລາຈອນ | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດຳເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025; | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 15 | 49210 | ຂົນສົ່ງໂດຍສານ ປະເພດລົດເມ | - ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>- ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດຳເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025. | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 16 | 49210 | ຂົນສົ່ງໂດຍສານ ປະເພດລົດຕູ້ | | |
| 17 | 49210 | ຂົນສົ່ງໂດນສານ ປະເພດລົດສອງແຖວ | | |
| 18 | 49221 | ຂົນສົ່ງໂດຍສານ ປະເພດລົດແທັກຊີ | | |
| 19 | 49222 | ຂົນສົ່ງໂດຍສານ ປະເພດລົດຕຸກໆ-ຈຳໂບ້ | | |
| 20 | 52211 | ບໍລິການຝາກລົດ | | |
| 21 | 81210 | ອະນາໄມຮັກສາຄວາມສະອາດຕຶກອາຄານທົ່ວໄປ | | |
| 22 | 52212 | ບໍລິການລາກແກ່ | | |
| 23 | 43220 | ການຕິດຕັ້ງທໍ່ສົ່ງນ້ຳ ຕິດຕັ້ງເຄື່ອງເຮັດຄວາມຮ້ອນ ແລະ ເຄື່ອງປັບອາກາດ (ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະ ກ່ຽວກັບການວ່າງທໍ່ນ້ຳປະປາໃນຕົວເມືອງ, ການຕິດຕັ້ງລະບົບນ້ຳປະປາ ແລະ ຕິດຕັ້ງລະບົບປັບອາກາດໃນອາຄານ) | | |

| | | | | |
|---|---|---|---|---|
| 24 | 49231 | ການຂົນສົ່ງສິນຄ້າທາງບົກພາຍໃນປະເທດ | – ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນທີ 12 ທັນວາ 2012;<br>– ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025. | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 25 | 45402 | ການສ້ອມແປງລົດຈັກ | – ກົດໝາຍວ່າດ້ວຍ ຍານພາຫະນະທາງບົກ, ສະບັບເລກທີ 04/ລສພຊ,ລົງວັນທີ 16 ພະຈິກ 2021.<br>– ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025. | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 26 | 45203 | ບໍລິການລ້າງອັດສີດ | – ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ລສພຊ,ລົງວັນທີ 16 ພະຈິກ 2021.<br>– ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025. | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 27 | 45202 | ບໍລິການເຄາະພົ່ນສີລົດ ອື່ນໆ | – ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ລສພຊ,ລົງວັນທີ 16 ພະຈິກ 2021.<br>– ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025. | ກະຊວງໂຍທາທິການ ແລະ ຂົນສົ່ງ |
| 28 | 45210 | ບໍລິການປະດັບຍົນ (ບໍ່ລວມເອົາຂາຍຍົກ ແລະ ຂາຍຍ່ອຍເຄື່ອງອາໄຫຼລົດຍົນ) | – ກົດໝາຍ ວ່າດ້ວຍຍານພາຫະນະທາງບົກ ສະບັບເລກທີ 04/ລສພຊ,ລົງວັນທີ 16 ພະຈິກ 2021.<br>– ຂໍ້ຕົກລົງ ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງ ຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025. | ກະຊວງໂຍທາທິການ ແລະ ຂົນສົ່ງ |

| | | | | |
|---|---|---|---|---|
| **ການເຄື່ອນໄຫວດ້ານທີ່ພັກເຊົ່າ ແລະ ບໍລິການອາຫານ** | | | | |
| 29 | 55102 | ເຮືອນພັກ, ຫ້ອງພັກ | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024. | ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ |
| **ດ້ານຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ** | | | | |
| 30 | 58131 | ການພິມຂ່າວສານໜັງສືພິມ, ບົດຄວາມ ແລະ ວາລະສານ | - ກົດໝາຍ ວ່າດ້ວຍການພິມຈຳໜ່າຍ ສະບັບເລກທີ 44/ສພຊ, ລົງວັນທີ 17 ກໍລະກົດ 2023;<br>- ກົດໝາຍ ວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016;<br>- ກົດໝາຍ ວ່າດ້ວຍວິຈິດສິນ ສະບັບເລກທີ 19/ສພຊ, ລົງວັນທີ 7 ກໍລະກົດ 2022. | ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ |
| 31 | 18120 | ການເຄື່ອນໄຫວ ບໍລິການກ່ຽວກັບການພິມ (ສຳລັບ ISIC ນີ້ແມ່ນ ສະຫງວນວຽກງານການພິມ) | | |
| 32 | 58110 | ການເຄື່ອງໄຫວດ້ານການພິມອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນ ສະເພາະທຸລະກິດການສ້າງຕັ້ງສຳນັກພິມຕ່າງໆ) | | |
| 33 | 59201 | ການເຄື່ອນໄຫວຈັດພິມບົດເພງ ແລະ ບັນທຶກສຽງ | | |
| 34 | 9602 | ການບໍລິການຕັດຜົມ ແລະ ເສີມສວຍອື່ນໆ | | |
| 35 | 74901 | ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ (ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະກ່ຽວກັບການແປພາສາລາວ) | | |
| 36 | 71101 | ການເຄື່ອນໄຫວດ້ານສະຖາປັດຕະຍະກຳ ແລະ ວິສາວະກຳ ແລະ ການໃຫ້ຄຳປຶກສາດ້ານເຕັກນິກທີ່ກ່ຽວຂ້ອງ (ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະ ກ່ຽວກັບກິດຈະການໃຫ້ຄຳປຶກສາດ້ານການສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ຕິດຕັ້ງດ້ານສະຖາປັດຕະຍະກຳ, ວິສາວະກຳລາວ ທີ່ຕິດພັນດ້ານປະຫວັດສາດ, ທຳມະຊາດ ແລະ ວັດທະນະທຳ) | | |

| | | | | |
|---|---|---|---|---|
| 37 | 60100 | ການອອກອາກາດທາງວິທະຍຸ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດການສ້າງຕັ້ງສະຖານີວິທະຍຸຢູ່ຊຸມຊົນ) | | |
| 38 | 95230 | ທຸລະກິດສ້ອມແປງເກີບ ແລະ ເຄື່ອງໜັງ | | |
| 39 | 96010 | ບໍລິການຊັກປຽກ, ຊັກແຫ້ງປະເພດແຜ່ນແພ ແລະ ຜະລິດຕະພັນຂົນສັດ | | |
| 40 | 96021 | ບໍລິການຕັດຜົມ ແລະ ເສີມສວຍ ທີ່ບໍ່ແມ່ນສັນຍະກຳ | | |
| 41 | 96030 | ບໍລິການຈັດງານປົງສົບ ແລະ ກິດຈະການທີ່ກ່ຽວພັນ | | |
| 42 | 96090 | ວຽກປະດັບປະດາສະຖານທີ່ຕ່າງໆສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະກ່ຽວກັບກິດຈະການທີ່ຕິດພັນກັບວຽກປະດັບປະດາສະຖານທີ່ ແລະ ກິດຈະການກ່ຽວກັບການຕິດຕັ້ງລະບົບໄຟ, ແສງສີ ແລະ ສຽງ | | |
| 43 | 60210 | ການອອກອາກາດທາງໂທລະພາບ( ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດການສ້າງຕັ້ງສະຖານີໂທລະພາບຢູ່ຊຸມຊົນ) | | |
| 44 | 16290 | ການຜະລິດ ຜະລິດຕະພັນ ຫຼື ສິນຄ້າທີ່ເປັນເຄື່ອງທີ່ລະນຶກຂອງລາວ | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024 ( ມາດຕາ109). | |
| 45 | 79120 | ທຸລະກິດນຳທ່ຽວ ພາຍໃນປະເທດ ແລະ ໃນພື້ນທີ່ສະເພາະໃດນຶ່ງ | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024 (ມາດຕາ109). | |
| 46 | 56120 | ຮ້ານອາຫານຂະໜາດນ້ອຍ | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024 ( ມາດຕາ109). | |
| | 79120 | ການເຄື່ອນໄຫວບໍລິການຕ້ອນຮັບອື່ນໆ ສຳລັບ ISIC ນີ້ແມ່ນສະຫງວນທ່ອງທ່ຽວພື້ນທີ່ສະເພາະໃດໜຶ່ງ | - ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 63/ສພຊ, ລົງວັນທີ 1 ກໍລະກົດ 2024 ( ມາດຕາ109). | |

| | | | | |
|---|---|---|---|---|
| **ການເຄື່ອນໄຫວດ້ານການເງິນ ແລະ ປະກັນໄພ** | | | | |
| 47 | 64309 | ຄັງເງິນ, ກອງທຶນ ແລະ ກິດຈັກການເງິນອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະສ້າງຕັ້ງຄັງເງິນ, ການສ້າງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ) | – ດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 184/ລບ, ລົງວັນທີ 20 ມິຖຸນາ 2022. | ທະນາຄານແຫ່ງ ສປປ ລາວ |
| 48 | 64922 | ການໃຫ້ສິນເຊື່ອກູ້ຢືມອື່ນໆ ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດໂຮງຊວດຈຳ) | – ດຳລັດ ວ່າດ້ວຍໂຮງຊວດຈຳ ສະບັບເລກທີ 248/ລບ, ລົງວັນທີ 26 ກໍລະກົດ 2016. | ທະນາຄານແຫ່ງ ສປປ ລາວ |
| **ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ** | | | | |
| 49 | 71102 | ການອອກແບບ, ກໍ່ສ້າງ ແລະ ຕິດຕັ້ງຕາຂ່າຍໄຟຟ້າແຮງດັນກາງ ແຕ່ 22kv–35kv ແລະ ຕໍ່າ 0.4kv | – ກົດໝາຍ ວ່າດ້ວຍໄຟຟ້າ ສະບັບເລກທີ 19/ສພຊ, ລົງວັນທີ 9 ພຶດສະພາ 2017. | ກະຊວງອຸດສາຫະກຳ ແລະ ການຄ້າ |
| **ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງບໍລິຫານ** | | | | |
| 50 | 78100 | ການເຄື່ອນໄຫວຂອງອົງການຈັດຫາງານ ທຸລະກິດບໍລິການຈັດຫາງານ | – ກົດໝາຍ ວ່າດ້ວຍການຈັດຫາງານ ສະບັບເລກທີ 37/ສພຊ, ລົງວັນທີ 17 ກໍລະກົດ 2023;<br>– ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ ສະບັບເລກທີ 1050/ຮສສ, ລົງວັນທີ 25 ມີນາ 2022. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| **ການສຶກສາ** | | | | |
| 51 | 85220 | ການສຶກສາດ້ານເຕັກນິກ ແລະ ວິຊາຊີບ ທຸລະກິດສູນພັດທະນາສີມືແຮງງານ, ຍົກເວັ້ນໂຮງຮຽນເຕັກນິກ-ວິຊາຊີບ, ວິທະຍາໄລເຕັກນິກເພາະເປັນການສົ່ງເສີມຕາມຮູບການສຶກສາແຫ່ງຊາດ ໄລຍະ 2 ປີ 2011-2015 | – ກົດໝາຍ ວ່າດ້ວຍການພັດທະນາສີມືແຮງງານ ສະບັບເລກທີ 70/ສພຊ, ລົງວັນທີ 11 ທັນວາ 2024;<br>– ກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;<br>– ກົດໝາຍ ວ່າດ້ວຍອາຊີວະສຶກສາ ສະບັບເລກທີ 63/ສພຊ, ລົງວັນທີ 12 ມິຖຸນາ 2019, | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |

| | | | | |
|---|---|---|---|---|
| 52 | 85499 | ການສຶກສາດ້ານອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ ສໍາລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດສອນພາສາລາວໃຫ້ຄົນຕ່າງປະເທດ | – ກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 69/ສພຊ, ລົງວັນທີ 11 ທັນວາ 2024;<br>– ກົດໝາຍ ວ່າດ້ວຍອາຊີວະສຶກສາ ເລກທີ 63/ສພຊ, ລົງວັນທີ 12 ມິຖຸນາ 2019. | ກະຊວງສຶກສາທິການ ແລະ ກິລາ |
| **ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ** | | | | |
| 53 | 86100 | ວຽກງານໂຮງພະຍາບານ (ສໍາລັບ ISIC ນີ້ສະຫງວນສະເພາະຫ້ອງກວດພະຍາດເອກະຊົນແຕ່ລະປະເພດ, ແຕ່ລະລັກສະນະ ແລະ ແຕ່ລະຂັ້ນໃນຂອບເຂດທົ່ວປະເທດ) | – ກົດໝາຍ ວ່າດ້ວຍການປິ່ນປົວ ສະບັບເລກທີ 48/ສພຊ, ລົງວັນທີ 20 ພະຈິກ 2023;<br>– ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດດໍາລັດ ວ່າດ້ວຍໂຮງໝໍເອກະຊົນ ສະບັບເລກທີ 1333/ສທ, ລົງວັນທີ 16 ພະຈິກ2017. | ກະຊວງສາທາລະນະສຸກ |
| **ການເຄື່ອນໄຫວບໍລິການອື່ນໆ** | | | | |
| 54 | 64309 | ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. | – ຂໍ້ຕົກລົງ ວ່າດ້ວຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບປັບປຸງ ສະບັບເລກທີ 695/ທຫລ, ລົງວັນທີ 06 ທັນວາ 2021. | ທະນາຄານແຫ່ງ ສປປ ລາວ |

**ໝາຍເຫດ:** ບັນຊີປະເພດທຸລະກິດສະຫງວນໄວ້ ສໍາລັບພົນລະເມືອງລາວ ແມ່ນໄດ້ຄົ້ນຄວ້າ ແລະ ສັງລວມມາຈາກຄໍາສະເໜີຂອງບັນດາຂະແໜງການທີ່ກ່ຽວຂ້ອງ, ປັບປຸງແທນ ແລະ ລົບລ້າງ ບັນຊີ ຄໍ ຕາມແຈ້ງການ ສະບັບເລກທີ 1328/ອຄ.ທຄວ, ລົງວັນທີ 13 ກໍລະກົດ 2015.